# Plan of Salvation

## ປະສົບການຂອງຄວາມລອດພົ້ນທີ່ຖືກຕ້ອງໃນພະຄຳພີ

ມະນຸດຄວນຈະເຮັດຢ່າງໃດ ຈຶ່ງຈະໄດ້ຄວາມລອດພົ້ນໃນພຣະເຢຊູຄຣິສ? ຄຳຕອບຫາພົບໄດ້ໃນພະຄຳພີ ຄືພຣະຄຳຂອງພຣະເຈົ້າມີໄວ້ສຳລັບພວກເຮົາ.

## ປະສົບການຂອງຄວາມລອດພົ້ນທີ່ຖືກຕ້ອງໃນພະຄຳພີ

ພຣະຄຳຂອງພຣະເຈົ້າໄດ້ບອກໃຫ້ເຮົາຮູ້ວ່າ ທຸກໆຄົນໄດ້ເຮັດຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ (ໂຣມ 3:23), ຊຶ່ງພຣະເຈົ້າປາຖນາໃຫ້ເຮົາມີຄວາມຊົມຊື່ນຍິນດີ. ໂດຍປະສົບການແລະການສັງເກດພວກເຮົາທຸກຄົນຮູ້ໄດ້ວ່າມະນຸດເຮົາມີຄວາມບາບມາແຕ່ກຳເນີດ, ຊຶ່ງເຮົາເກີດມາມີຄວາມເຫັນແກ່ຕົວ, ບໍ່ມີຄວາມສັດຊື່ແລະທໍຣະຍົດ. ພວກເຮົາທັງໝົດໄດ້ເຮັດບາບຄັ້ງໜຶ່ງຫຼືຫລາຍຄັ້ງໃນຊີວິດຂອງເຮົາ. ຖ້າເຮົາທັງຫລາຍເວົ້າວ່າ ພວກເຮົາບໍ່ມີບາບ ພວກເຮົາກໍ່ຫລອກລວງຕົວເອງ ແລະຄວາມຈິງບໍ່ໄດ້ມີຢູ່ໃນພວກເຮົາ (1 ໂຢຮັນ 1:8).

**ຂ່າວດີຄື** ພຣະເຢຊູຜູ້ເປັນພຣະຜູ້ເປັນເຈົ້າໄດ້ມາເກີດເປັນມະນຸດ, ເຂົ້າມາໃນໂລກແລະມອບຊີວິດຂອງພຣະອົງເປັນເຄື່ອງບູຊາໄຖ່ເພື່ອຄວາມຜິດບາບຂອງພວກເຮົາ (ລູກາ 19:10). ເມື່ອພຣະອົງສິ້ນພຣະຊົນເທິງໄມ້ກາງແຂນ ພຣະອົງໄດ້ໄຖ່ບາບກຳແກ່ມະນຸດທຸກໆຄົນໃນໂລກນີ້. ແລະເປີດຫົນທາງໃຫ້ພວກເຮົາໄດ້ຮັບການຍົກໂທດບາບ (ໂຢຮັນ 1:29). ໂດຍວ່າພຣະບຸດຂອງພຣະຜູ້ເປັນເຈົ້າຊຶ່ງປະສູດມາຈາກຍິງສາວຜູ້ບໍຣິສຸດ ດ້ວຍພຣະວິນຍານບໍຣິສຸດ, ພຣະເຢຊູບໍ່ໄດ້ມີບາບມາແຕ່ກຳເນີດເໝືອນດັ່ງກັບພວກເຮົາ. ເຫດສະນັ້ນ ພຣະອົງຈຶ່ງສາມາດສິ້ນພຣະຊົນເພື່ອໄຖ່ບາບກຳຂອງອກເຮົາ.

ພຣະເຈົ້າຊົງປະກົດໃນສະພາບຂອງມະນຸດ (ໂຢຮັນ 1:1; 1 ຕີໂມທຽວ 3:16; ມັດທາຍ 1:23), ພຣະເຢຊູມີອຳນາດເພື່ອຍົກໂທດບາບກຳຂອງພວກເຮົາ. ບໍ່ມີຜູ້ໃດຈະສາມາດສຳຣະຄວາມຜິດບາບຂອງຕົວເອງທີ່ເຮັດມາໃນອາດີດໄດ້ ຫລືສາມາດທຳລາຍຄວາມຜິດບາບຂອງຕົວເອງທີ່ມີມາແຕ່ກຳເນີດ, ມີແຕ່ພຽງພຣະເຢຊູເທົ່ານັ້ນທີ່ສາມາດເຮັດໄດ້ ແລະໃຫ້ບັງເກີດໃໝ່ໃນຄວາມຍຸດຕິທຳ. (ກະລູນາເບິ່ງໃນ 1 ໂຢຮັນ 1:9; ໂຢຮັນ 3:3-5).

**ມະນຸດຄວນຈະເຮັດຢ່າງໃດຈຶ່ງຈະໄດ້ຮັບຄວາມລອດພົ້ນໃນພຣະເຢຊູຄຣິສ?** ຄຳຕອບຫາພົບໄດ້ໃນພະຄຳພີ ຄືພຣະຄຳຂອງພຣະເຈົ້າມີໄວ້ສຳລັບພວກເຮົາ. ໃນພາລະກິດຂອງພຣະອົງ, ພຣະເຢຊູໄດ້ບອກໃຫ້ເຮົາຮູ້ທາງໄປສູ່ອານາຈັກຂອງພຣະເຈົ້າ ໂດຍການບັງເກີດໃໝ່ດ້ວຍນ້ຳແລະດ້ວຍພຣະວິນຍານ(ໂຢຮັນ 3:5).
ພຣະອົງໄດ້ສັ່ງສອນວ່າຜູ້ທີ່ຈະເຂົ້າໄປແຜ່ນດິນຂອງພຣະເຈົ້າໄດ້ຈະຕ້ອງກັບໃຈ "ຖິ້ມໃຈເກົ່າເອົາໃຈໃໝ່" (ມັດທາຍ4:17; ລູກາ13:3,5). ພຣະອົງຮັບປະກັນແກ່ພວກເຮົາວ່າ ພຣະເຈົ້າປະທານພຣະວິນຍານບໍຣິສຸດແກ່ໝົດທຸກຄົນທີ່ຂໍຈາກພຣະອົງ(ລູກາ 11:13).
ຫລັງຈາກການຄືນພຣະຊົນຂອງພຣະອົງ, ພຣະເຢຊູໄດ້ບອກສາວົກຂອງພຣະອົງວ່າ "ການກັບໃຈໃໝ່ແລະການຍົກໂທດແກ່ຄວາມຜິດບາບ ຄວນຈະປະກາດໃນນາມຂອງພຣະອົງແກ່ທຸກໆຊາດ ເລີ້ມຕົ້ນທີ່ເມືອງເຢລູຊາເລັມ" (ລູກາ 24:49; ກິຈການ 1:4-8).

ສິບວັນຕໍ່ມາ ຫລັງຈາກພຣະເຢຊູສະເດັດຂຶ້ນສູ່ສວັນ, ມີປະມານ 120 ຄົນຊຶ່ງເປັນລູກສິດຂອງພຣະອົງໄດ້ຮັບພຣະວິນຍານບໍຣິສຸດແລະປາກພາສາຕ່າງໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາເວົ້ານັ້ນ. ນີ້ເປັນໂອກາດອັນສຳຄັນອັນຍິ່ງໃຫຍ່ ຄືເປັນການເລີ້ມຕົ້ນແຜ່ນການແຫ່ງຄວາມລອດພົ້ນຂອງພຣະເຈົ້າເພື່ອມະນຸດທັງໂລກ, ຕາມຄຣິສຕຈັກພຣະຄຳພີໃໝ່.

ປະຊາຊົນເປັນຈຳນວນພັນໆຄົນ ໄດ້ຮູ້ເຫັນເປັນພະຍານເຖິງການຖອກເທພຣະວິນຍານບໍຣິສຸດແກ່120 ຄົນ.ແລະພວກເຂົາຖາມເຖິງຄວາມໝາຍທີ່ຄົນເຫຼົ່ານີ້ປາກພາສາຕ່າງໆ ຊຶ່ງພວກເຂົາບໍ່ໄດ້ຮຽນມາ. ອາສາວົກ ເປໂຕຈຶ່ງໄດ້ອະທິບາຍວ່າ ການປາກພາສາຕ່າງໆນັ້ນ ເປັນສິ່ງຢັ້ງຢືນວ່າພຣະເຈົ້າໄດ້ຖອກເທພຣະວິນຍານຂອງພຣະອົງ. ເພາະວ່າພຣະເຢຊູໄດ້ສິ້ນພຣະຊົນເພື່ອຄວາມຜິດບາບຂອງເຮົາແລະພຣະເຈົ້າຊົງຍົກພຣະອົງຂຶ້ນ. ແລ້ວປະຊາຊົນຈຶ່ງຖາມພວກອັກຄະສາວົກວ່າ, "ພວກເຮົາຄວນຈະເຮັດຢ່າງໃດ?"(ກິຈການ 2:37). ພວກເຂົາຕ້ອງການຄວາມລອດພົ້ນ,ສະນັ້ນພວກເຂົາຈຶ່ງຖາມວ່າ ຄວນຈະເຮັດຢ່າງໃດຈຶ່ງຈະໄດ້ຮັບພຣະວິນຍານບໍຣິສຸດ. ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ "ຈົ່ງຖິ້ມໃຈເກົ່າອົາໃຈໃໝ່ ແລະຮັບບັບຕິສະມາໃນນາມຂອງພຣະເຢຊູຄຣິສທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ(ກິຈການ 2:38) ໃນພຣະນາມນີ້ ເປັນຄຳຕອບໃຫ້ແກ່ຊາວຊາມາເຣັຽ (ກິຈການ 8:5-17), ແກ່ອາຈານເປົາໂລ (ກິຈການ 9:6-17; 22:16), ແກ່ຄົນຕ່າງຊາດໃນກາຍຊາເຣັຽ (ກິຈການ 10:34-48), ແກ່ຜູ້ທີ່ໄດ້ຮັບບັບຕິສະມາໂດຍ ໂຢຮັນບັບຕິສະໂຕ (ກິຈການ 19:1-18).

ແນວທາງແຫ່ງຄວາມເຊື່ອແບບນີ້ຄື ການກັບໃຈໃໝ່, ຮັບບັບຕິສະມາດ້ວຍນໍ້າ, ແລະຮັບພຣະວິນຍານບໍຣິສຸດ ຍັງເປັນແນວທາງແຜນການແຫ່ງຄວາມລອດພົ້ນສໍາລັບພວກເຮົາ ຈົນກະທັ້ງທຸກວັນນີ້. ແມ່ນບໍ່ມີແນວທາງ ຄວາມລອດພົ້ນອັນອື່ນໃດ, ບໍ່ມີຂ່າວປະເສີດຄວາມຈິງອັນອື່ນໃດ. ອາຈານເປົາໂລໄດ້ຂຽນໄວ້ວ່າ " ແຕ່ເຖິງແມ່ນວ່າພວກເຮົາຫຼືເທວະດາຈາກສວັນກໍ່ດີ ຈະມາປະກາດຂ່າວປະເສີດແກ່ທ່ານທັງຫລາຍ ນອກຈາກຂ່າວປະເສີດທີ່ເຮົາໄດ້ປະກາດແກ່ທ່ານແລ້ວກໍ່ໃຫ້ຜູ້ນັ້ນຖືກປ້ອຍດ່າ " ( ຄາລາເຕັຽ 1:8).

**ດ້ວຍເຫດໃດຈຶ່ງຕ້ອງມີຄວາມເຊື່ອໃນພຣະເຢຊູ?** ພວກເຮົາບໍ່ສາມາດໃຫ້ຄວາມລອດພົ້ນແກ່ຕົວເຮົາເອງໄດ້, ແຕ່ໂດຍການເຊື່ອໃນພຣະເຢຊູ. ພວກເຮົາຍອມຮັບເອົາການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນເພື່ອຄວາມຜິດບາບຂອງພວກເຮົາ. ສິ່ງນີ້ເຮັດໃຫ້ພຣະເຈົ້າຍົກໂທດບາບຂອງພວກເຮົາເປັນໄປໄດ້. ດ້ວຍວ່າຊຶ່ງທ່ານທັງຫລາຍຊົງໂຜດໃຫ້ພົ້ນນັ້ນກໍ່ຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ບໍ່ແມ່ນພວກທ່ານເຮັດເອົາເອງ (ເອເຟໂຊ 2:8)

**ດ້ວຍເຫດໃດຈຶ່ງຕ້ອງກັບໃຈຈາກຄວາມຜິບາບຂອງພວກເຮົາ?** ເພາະວ່າ ພວກເຮົາຈໍາເປັນຕ້ອງສາຣະພາບວ່າພວກເຮົາເປັນຄົນບາບ, ແລະອ້ອນວອນໃຫ້ພຣະເຈົ້າຊົງຍົກໂທດບາບແກ່ພວກເຮົາ (1 ໂຢຮັນ1:8-10). ດ້ວຍຄວາມຊ່ວຍເຫຼືອຂອງພຣະເຈົ້າ, ພວກເຮົາຫັນຫລັງໜີຈາກແນວທາງຄວາມບາບຂອງພວກເຮົາ ແລະເດີນໄປທາງໜ້າຫາພຣະເຈົ້າແລະຄວາມຍຸດຕິທໍາຂອງພຣະອົງໃນພຣະເຢຊູຄຣິສເຈົ້າ. ເມື່ອພວກເຮົາກັບໃຈ(ຖິ້ມໃຈເກົ່າເອົາໃຈໃໝ່), ພວກເຮົາເປີດປະຕູໃຫ້ພຣະເຈົ້າຍົກໂທດບາບຂອງພວກເຮົາ.

**ດ້ວຍເຫດໃດຈຶ່ງຕ້ອງຮັບບັບຕິສະມາໃນນາມຂອງພຣະເຢຊູຄຣິສ?** ການຮັບບັບຕິສະມາດ້ວຍນໍ້າ ແມ່ນເພື່ອການຊົງຍົກບາບໂທດ( ກິຈການ 2:38 ), ແລະເມື່ອຄວາມບາບຖືກຍົກໂທດໃຫ້(ອະພັຍໃຫ້)ໃນນາມຂອງພຣະເຢຊູຄຣິສ( ລູກາ 24:47; ກິຈການ 4:12; 10:43; 22:16 ). ຕັ້ງແຕ່ພຣະເຢຊູໄດ້ສິ້ນພຣະຊົນເພື່ອຄວາມບາບຂອງພວກເຮົາ, ພວກເຮົາໄດ້ຮັບຄວາມລອດພົ້ນດ້ວຍຄວາມເຊື່ອໃນພຣະອົງ, ດ້ວຍວ່າພວກເຮົາໄດ້ຖືກຝັງກັບພຣະອົງໃນການສິ້ນພຣະຊົນຂອງພຣະອົງ ແລະພວກເຮົາກໍ່ເປັນຄືນມາໃໝ່ກັບພຣະອົງ ໃນການຄືນພຣະຊົນຂອງພຣະອົງ ເພື່ອຈະ "ດໍາເນີນຕາມຊີວິດໃໝ່."( ກະລຸນາເບິ່ງໃນ ໂຣມ 6:1-8 )

ການຮັບບັບຕິສະມາດ້ວຍນໍ້າໃນນາມຂອງພຣະເຢຊູຄຣິສ ແມ່ນເດີນຕາມວິທີທີ່ຖືກຕ້ອງຊຶ່ງອັກຄະສາວົກເຮັດມາ, ດ້ວຍວ່າຄຣິສຕຈັກທໍາອິດ ໃຫ້ບັບຕິສະມາແກ່ຜູ້ທີ່ເຊື່ອໃນນາມຂອງພຣະເຢຊູຄຣິສເທົ່ານັ້ນ(ກິຈການ 2:38; 8:16;

10:48; 19:5; 22;16). (ກະລູນາເບິ່ງດ້ວຍໃນ ໂຣມ 6:4; ໂກໂລຊາຍ 2:12; ຄາລາເຕັຽ 3:27). ທີ່ບອນ ໃຫ້ຮັບບັບຕິສະມາໃນນໍ້າ ພວກເຮົາເວົ້າອອກນາມພຣະເຢຊູຄຣິສເພື່ອການຍົກໂທດບາບ(ການອະພັຍ) ແລະຄວນ ອອກນາມພຣະເຢຊູໃສ່ເທິງພວກເຮົາ. ນີ້ຄືແນວທາງທີ່ພວກເຮົາສະແດງອອກເຖິງຄວາມເຊື່ອຂອງພວກເຮົາໃນການ ສິ້ນພຣະຊົນຂອງພຣະອົງເພື່ອຍົກໂທດບາບ ແລະໃນການຄືນພຣະຊົນຂອງພຣະອົງ ເພື່ອມີຊີວິດໃໝ່ໃນພຣະອົງ.

ເມື່ອພວກເຮົາໃຊ້ພຣະນາມຂອງພຣະເຢຊູໃນການໃຫ້ບັບຕິສະມາໃນນໍ້າ, ພວກເຮົາເຮັດໃຫ້ຄຳສັ່ງຂອງພຣະເຢຊູ ຄົບບໍຣິບູນ ໃນການບັບຕິສະມາເພື່ອໄຖ່ໂທດບາບໃນນາມ(ເອກະພົດ) " ນາມຂອງພຣະບິດາ, ພຣະບຸດ, ແລະ ພຣະວິນຍານບໍຣິສຸດ " (ມັດທາຍ 28:19).

**ດ້ວຍເຫດໃດຈື່ງຈຳເປັນຕ້ອງໄດ້ຮັບບັບພຣະວິນຍານບໍຣິສຸດ?** ມັນເປັນການບັງເກີດທາງດ້ານວິນຍານ ເພື່ອເຂົ້າ ໄປໃນອານາຈັກຂອງພຣະເຈົ້າ(ໂຢຮັນ 3:5; 1 ໂກຣິນໂທ 12:13). ໃນຊ່ວງພາຣະກິດຂອງໂຢຮັນບັບຕິສະໂຕ ໄດ້ບອກໄວ້ລ່ວງໜ້າວ່າ ພຣະເຢຊູຈະໃຫ້ການບັບຕິສະມາດ້ວຍພຣະວິນຍານບໍຣິສຸດ. ເຖິງແມ້ວ່າພຣະເຢຊູເອງໄດ້ ຢັ້ງຢືນວ່າ ຜູ້ທີ່ເຊື່ອໃນພຣະອົງຈະໄດ້ຮັບພຣະວິນຍານບໍຣິສຸດ. ບໍ່ມີຜູ້ໃດໄດ້ຮັບພຣະວິນຍານບໍຣິສຸດເທື່ອ ຈົນກະທັ້ງ ພຣະອົງຊົງໄດ້ຮັບສະງ່າຣາສີ ຫລັງຈາກການສິ້ນພຣະຊົນແລະການຄືນພຣະຊົນຂອງພຣະອົງ(ໂຢຮັນ 7:37-39). ຫລັງຈາກການຄືນພຣະຊົນຂອງພຣະອົງ, ພຣະເຢຊູໄດ້ບອກແກ່ສາວົກຂອງພຣະອົງຈົ່ງລໍເຝົ້າຢູ່ໃນເມືອງເຢຣູຊາ ເລັມ ຈົນກະທັ້ງພວກເຂົາໄດ້ຮັບພຣະວິນຍານບໍຣິສຸດ(ລູກາ 24:49; ກິຈການ 1:4-8).

ໃນວັນເພັນເຕຄໍສະເຕ ຜູ້ທີ່ເຊື່ອກໍ່ໄດ້ຮັບພຣະວິນຍານບໍຣິສຸດ(ກິຈການ 2:4), ແລະນັບຕັ້ງແຕ່ນັ້ນມາຜູ້ໃດກໍ່ຕາມ ຜູ້ທີ່ເຊື່ອໃນພຣະເຢຊູ. ການຖິ້ມໃຈເກົ່າເອົາໃຈໃໝ່ແລະຮັບບັບຕິສະມາໃນນາມຂອງພຣະເຢຊູຄຣິສຈະໄດ້ຮັບພຣະ ວິນຍານບໍຣິສຸດ(ກິຈການ 2:38-39). ໃນພະຄຳກິຈການ,ຄົນຢິວໄດ້ຮັບພຣະວິນຍານບໍຣິສຸດ(ກິຈການ 2:4); ຊາວຊາມາຣີຕັນໄດ້ຮັບພຣະວິນຍານບໍຣິສຸດ(ກິຈການ 8:17); ຊາວຕ່າງຊາດໄດ້ຮັບພຣະວິນຍານບໍຣິສຸດ(ກິຈ ການ 10:44-48); ແລະພວກລູກສິດຂອງໂຢຮັນບັບຕິສະໂຕໄດ້ຮັບພຣະວິນຍານບໍຣິສຸດ(ກິຈການ 19:1-6). ສິ່ງເຫຼົ່ານີ້ເປັນທີ່ສະແດງໃຫ້ພວກເຮົາເຫັນວ່າ ຂອງພຣະຣາຊທານແຫ່ງພຣະວິນຍານບໍຣິສຸດແມ່ນເພື່ອທຸກໆຄົນ, ບໍ່ເລືອກເຊື້ອຊາດ, ສາສນາ, ຜິວພັນ ຫຼື ຊົນຊາດ. ພຣະວິນຍານບໍຣິສຸດເປັນກາປະທັບຕາ ຂອງພຣະຜູ້ເປັນເຈົ້າ ໃນຊີວິດຂອງເຮົາແລະຮັບປະກັນມໍຣະດົກແຫ່ງຊີວິດນິຣັນດອນ(ເອເຟໂຊ 1:13-14).

**ຄວນເຮັດຢ່າງໃດຈຶ່ງຈະໄດ້ຮັບພຣະວິນຍານບໍຣິສຸດ?** ຜູ້ທີ່ໄດ້ຮັບພຣະວິນຍານບໍຣິສຸດໃນທຸກວັນນີ້ ກໍ່ຄືແບບດຽວກັບພວກທີ່ໄດ້ຮັບພຣະວິນຍານບໍຣິສຸດໃນພະຄຳກິຈການ. ເມື່ອພວກເຮົາເຊື່ອ, ຖິ້ມໃຈເກົ່າເອົາໃຈໃໝ່, ແລະຮັບບັບຕິສະມາ, ພວກເຮົາພ້ອມແລ້ວທີ່ຈະໄດ້ຮັບພຣະວິນຍານບໍຣິສຸດ. ການຖິ້ມໃຈເກົ່າເອົາໃຈໃໝ່ແລະຮັບບັບຕິສະມາ ເປັນຄວາມເຊື່ອທີ່ຕ້ອນຮັບເອົາຂ່າວປະເສີດຂອງພຣະເຈົ້າ ແລະໂດຍຄວາມເຊື່ອພວກເຮົາອານຸຍາດໃຫ້ພຣະເຈົ້າຖອກເທພຣະວິນຍານບໍຣິສຸດແກ່ພວກເຮົາ. ພຣະເຈົ້າປະທານວິນຍານໃຫ້ແກ່ທຸກໆຄົນ ຜູ້ທີ່ເປີດຈິດໃຈດ້ວຍຄວາມເຊື່ອໝັ້ນໃນພຣະອົງ.

**ຈະຮູ້ໄດ້ຢ່າງໃດເມື່ອໄດ້ຮັບພຣະວິນຍານບໍຣິສຸດ?** ເມື່ອໄດ້ຮັບພຣະວິນຍານບໍຣິສຸດ ຈະປາກພາສາຕ່າງໆຕາມພຣະວິນຍານຊົງໂຜດໃຫ້ເຂົາເວົ້ານັ້ນ. ນີ້ເປັນເຄື່ອງໝາຍທີ່ບອກໃຫ້ຮູ້ວ່າໄດ້ຮັບພຣະວິນຍານບໍຣິສຸດຕາມພະຄຳພີ. ປາກພາສາຕ່າງໆ ເປັນສັນຍານໃຫ້ຮູ້ວ່າພວກເຂົາໄດ້ຮັບພຣະວິນຍານບໍຣິສຸດໃນພະຄຳກິຈການ(ກິຈການ 2:4; 8:16-18; 10:44-47; 19:6). ປາກພາສາຕ່າງໆເປັນສິ່ງທີ່ຖືກຕ້ອງໃນພະຄຳພີ ທີ່ສະແດງໃຫ້ຮູ້ວ່າຜູ້ນັ້ນໄດ້ຮັບພຣະວິນຍານບໍຣິສຸດ.

**ຖ້າຂ້າພະເຈົ້າມີຂໍ້ຄຳຖາມ ກ່ຽວກັບເລື່ອງເຫຼົ່ານີ້, ຂ້າພະເຈົ້າຄວນຈະເຮັດຫຍັງ?** ພຣະເຢຊູໄດ້ເວົ້າແກ່ປະຊາຊົນຜູ້ທີ່ມີຄຳຖາມຈຳນວນຫລວງຫລາຍວ່າ "ທ່ານທັງຫລາຍຄົ້ນຫາໃນພຣະທັມຄັມພີ ເພາະພວກທ່ານຄຶດວ່າໃນພຣະທັມຄັມພີນັ້ນມີຊີວິດອັນຕລອດໄປເປັນນິດ ແມ່ນພຣະຄັມພີນັ້ນແຫລະ, ເປັນພະຍານໃຫ້ແກ່ເຮົາ" (ໂຢຮັນ 5:39). ຖ້າທ່ານມີຄຳຖາມ,ຈົ່ງຄົ້ນຫາໃນພຣະທັມຄັມພີຈະຢັ້ງຢືນເຖິງຄວາມຈິງ. ແລ້ວດ້ວຍຄວາມເຊື່ອຈົ່ງຖິ້ມໃຈເກົ່າເອົາໃຈໃໝ່,ຮັບບັບຕິສະມາໃນນາມຂອງພຣະເຢຊູຄຣິສແລະຮັບເອົາພຣະວິນຍານບໍຣິສຸດ. ເມື່ອທ່ານເຮັດຢ່າງນັ້ນ, ທ່ານຈະເຂົ້າຮ່ວມກັບຄຣິສຕຈັກທີ່ໄດ້ສະຖາປະນາຂຶ້ນ ໃນພະຄັມກິຈການແລະຫລາຍລ້ານກວ່າຄົນໃນໂລກ.

ຂໍໃຫ້ຄວາມຮັກແລະພຣະຄຸນຂອງພຣະຜູ້ເປັນເຈົ້າອວຍພອນທ່ານ ແລະນຳພາທ່ານຕລອດໄປເທີ້ນ...

ນີ້ເປັນຄວາມຫວັງຂອງເຮົາ ທີ່ຢາກໃຫ້ທ່ານໄດ້ຮຽນຮູ້ກ່ຽວກັບແຜ່ນການແຫ່ງຄວາມລອດພົ້ນຂອງພຣະເຈົ້າ.

ຖ້າທ່ານປາຖນາຢາກຮູ້ເພີ່ມເຕີມ ຫຼື ຕ້ອງການໂອລົມກັບຜູ້ໃດຜູ້ໜຶ່ງ ກ່ຽວກັບຄວາມລອດພົ້ນໃນພຣະທັມຄັມພີ, ກະລຸນາຕິດຕໍ່: ທອງຄຳ ເຮືອງສີໄຊຍາສິດ (450) 627 0032.



http://www.sayadi-al-nas.com